# ເຂື່ອນໄຟຟ້ານ້ຳທາ 1 ຢູ່ແຂວງບໍ່ແກ້ວ ຈະເລີ່ມຜະລິດໄຟຟ້າ ທ້າຍປີ 2017 ນີ້!

By **ດາວແດງ ອິນວຽງໄຊ** - 19/04/2016



ບໍລິສັດ ໄຟຟ້ານ້ຳທາ 1 ລາວ ຈຳກັດ ເປັນວິສາຫະກິດປະສົມ ລາວ-ຈີນ ໂດຍລັດວິສາຫະກິດໄຟຟ້າລາວ ຖືຮຸ້ນ 20% ແລະ CSGI ຖືຮຸ້ນ 80% ໂຄງການເຂື່ອນໄຟຟ້ານ້ຳທາ 1 ມີໄລຍະສຳປະທານ 32 ປີ (4 ປີສຳລັບກໍ່ສ້າງ ແລະ 28 ປີສຳລັບດຳເນີນງານ) ໂຄງການຕັ້ງຢູ່ບ້ານຜາຊ້າງ ເມືອງຜາອຸດົມ ແຂວງບໍ່ແກ້ວ ມີກຳລັງຕິດຕັ້ງ 168 MW ປະກອບມີຈັກປັ່ນໄຟ 3 ເຄື່ອງ ເຊິ່ງຄາດວ່າຈັກເຄື່ອງທຳອິດຈະສາມາດເລີ່ມຜະລິດໄຟຟ້າໄດ້ໃນທ້າຍປີ 2017 ແລະ ສຳເລັດການກໍ່ສ້າງທັງໝົດໃນຕົ້ນປີ 2018 ປັດຈຸບັນ ກຳລັງດຳເນີນການກໍ່ສ້າງຕົວເຂື່ອນຫຼັກ ອຸໂມງສົ່ງນ້ຳ ອາຄານນ້ຳລົ້ນ ໂຮງຈັກ ແລະ ອື່ນໆ ພ້ອມນັ້ນຍັງສຳເລັດການອ່າຍແລວນ້ຳແລ້ວໃນທ້າຍປີ 2015 ໂດຍລວມປະຕິບັດໄດ້ແລ້ວປະມານ 28,5% ຂອງໜ້າວຽກທັງໝົດ ໂຄງການນີ້ມີປະຊາຊົນຖືກຍົກຍ້າຍ 10.000 ກວ່າຄົນ ຖືໄດ້ວ່າເປັນວຽກງານຍົກຍ້າຍທີ່ໃຫຍ່ທີ່ສຸດ ທຽບໃສ່ຂະໜາດຂອງເຂື່ອນປະຊາຊົນ ຈະຖືກຍົກຍ້າຍໄປບ່ອນສູງຢູ່ຕາມຈຸດຍົກຍ້າຍ 11 ຈຸດໃນແຂວງບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ ເຊິ່ງປັດຈຸບັນແມ່ນໄດ້ດຳເນີນການແລ້ວ ພ້ອມກັບວຽກງານຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ.

ແຫລ່ງຂ່າວ:

ວຽງຈັນໃໝ່ VIENTIANE MAI NEWSPAPER